ອົງການປະກັນສັງຄົມ
ຂາເຂົ້າ ເລກທີ 0091
ວັນທີ 28/12/2014

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 3623/ຮສສ.

ນະຄອນຫຼວງວຽງຈັນ, ວັນທີ 23 DEC 2014

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງປະຕິບັດການອຸດໜູນວ່າງງານ

- ອີງຕາມ ກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 34/ສພຊ, ລົງວັນທີ 26 ກໍລະກົດ 2013;
- ອີງຕາມ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນສັງຄົມ ສະບັບເລກທີ 2434/ຮສສ, ລົງວັນທີ 29 ກໍລະກົດ 2014;
- ອີງຕາມ ໜັງສືສະເໜີຂອງອົງການປະກັນສັງຄົມ ສະບັບເລກທີ 0571/ອປສ, ລົງວັນທີ 25 ກັນຍາ 2014 ແລະ ການຄົ້ນຄວ້າເຫັນດີຂອງກົມປະກັນສັງຄົມ ຄັ້ງວັນທີ 29 ກັນຍາ 2014.

**ລັດຖະມົນຕີວ່າການ ຕົກລົງ:**

ມາດຕາ 1. ການອຸດໜູນວ່າງງານ

ການອຸດໜູນວ່າງງານ ແມ່ນ ການສະໜອງເງິນອຸດໜູນເປັນລາຍເດືອນ ໃຫ້ຜູ້ປະກັນຕົນໃນເວລາວ່າງງານ ເປັນແຕ່ລະໄລຍະ.

ມາດຕາ 2. ເງື່ອນໄຂການອຸດໜູນວ່າງງານ

ຜູ້ຈະໄດ້ຮັບການອຸດໜູນວ່າງງານ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ໄດ້ຖອກເງິນສົມທົບເຂົ້າກອງທຶນປະກັນສັງຄົມແຫ່ງຊາດ ແຕ່ ສິບສອງ ເດືອນຂຶ້ນໄປ ໃນໄລຍະ 24 ເດືອນສຸດທ້າຍ;
2. ວ່າງງານຍ້ອນການລົ້ມລະລາຍຂອງຫົວໜ່ວຍແຮງງານ ຫຼື ການລະດົມໃຫ້ອອກຈາກວຽກ;
3. ວ່າງງານຍ້ອນຄວາມຕ້ອງການຫຼຸດຈໍານວນແຮງງານ ເນື່ອງຈາກວິກິດການດ້ານເສດຖະກິດທີ່ມີຜົນກະທົບຕໍ່ການຜະລິດຂອງຫົວໜ່ວຍແຮງງານ;
4. ວ່າງງານ ແຕ່ ສາມສິບວັນຂຶ້ນໄປ ໂດຍມີການຢັ້ງຢືນຈາກຫົວໜ່ວຍແຮງງານທີ່ກ່ຽວຂ້ອງ ຢ່າງຖືກຕ້ອງ;
5. ມີສຸຂະພາບແຂງແຮງ ແລະ ສາມາດກັບເຂົ້າສູ່ຕະຫຼາດແຮງງານ;
6. ຜູ້ທີ່ໄດ້ຮັບການອຸດໜູນວ່າງງານມາກ່ອນ ຕ້ອງສະສົມເງິນສົມທົບສໍາລັບການອຸດໜູນວ່າງງານຕື່ມອີກ ສິບສອງເດືອນ ຂຶ້ນໄປ ຈຶ່ງສາມາດໄດ້ຮັບການອຸດໜູນວ່າງງານຄັ້ງໃໝ່.

ມາດຕາ 3. ເງື່ອນໄຂທີ່ບໍ່ໄດ້ຮັບການອຸດໜູນວ່າງງານ

ເງື່ອນໄຂທີ່ບໍ່ໄດ້ຮັບການອຸດໜູນວ່າງງານ ມີ ດັ່ງນີ້:

1. ເຮັດວຽກຕາມລະດູການ ຫຼື ເຮັດວຽກຕາມຜະລິດຕະພັນ;
2. ລະເມີດສັນຍາແຮງງານ ຫຼື ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ;
3. ສະໝັກໃຈລາອອກຈາກວຽກດ້ວຍເຫດຜົນຕ່າງໆ;
4. ເສັຍກຳລັງແຮງງານ ຫຼື ເສັຍອົງຄະ;
5. ໄລຍະພັກແລ້ງຂອງຄູ ໃນໂຮງຮຽນເອກະຊົນ;
6. ຜູ້ກຳລັງຮັບເງິນອຸດໜູນວ່າງງານ ທີ່ໄດ້ເຮັດວຽກໃໝ່ ຈະຖືກຕັດເງິນອຸດໜູນວ່າງງານທີ່ຍັງເຫຼືອ.

ມາດຕາ 4. ເຫັນດີໃຫ້ຫົວໜ່ວຍແຮງງານ ແລະ ຜູ້ອອກແຮງງານ ຖອກເງິນສົມທົບເພີ່ມ ຜູ້ລະ 1% ຂອງເງິນເດືອນ ຫຼື ຄ່າແຮງງານ ລວມເປັນ 2% ສຳລັບການອຸດໜູນວ່າງງານ ຊຶ່ງສັງລວມອັດຕາເງິນສົມທົບເພີ່ມຈາກ 9,5% ເປັນ 11,5% ໂດຍເລີ່ມຈັດຕັ້ງປະຕິບັດນັບແຕ່ເດືອນ ມັງກອນ 2015 ເປັນຕົ້ນໄປ.

ມາດຕາ 5. ກົມປະກັນສັງຄົມ, ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ, ບັນດາຫົວໜ່ວຍແຮງງານ, ຜູ້ອອກແຮງງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 6. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ໄດ້ລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີວ່າການ**

ອ່ອນຈັນ ທຳມະວົງ